# ກົມອາຊີວະສຶກສາ ແລະ ລາວ ໂທລະຄົມ ເຊັນບົດບັນທຶກຄວາມເຂົ້າໃຈ ການ ຮ່ວມມືກ່ຽວກັບ ການສົ່ງເສີມວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

ໃນຕອນເຊົ້າ ວັນທີ 11 ຕຸລາ 2023 ທີ່ ສຳນັກງານໃຫ່ຍ ບໍລິສັດ ລາວ ໂທລະຄົມມະນາຄົມ ມະຫາຊົນ ໄດ້ມີພິທີເຊັນບົດບັນທຶກຄວາມເຂົ້າໃຈ ການຮ່ວມມືດ້ານການສະໜອງບໍລິການການສື່ສານໂທລະຄົມມະນາຄົມ, ການບໍລິການດ້ານຂໍ້ມູນ-ຂ່າວສານ ເພື່ອໃຫ້ສັງຄົມໄດ້ເຂົ້າເຖິງການພັດທະນາວຽກງານອາຊີວະສຶກສາຢ່າງກວ້າງຂວາງ ລະຫວ່າງ ກົມອາຊີວະສຶກສາ ກະຊວງສຶກສາທິການ ແລະ ກິລາ ກັບ ບໍລິສັດ ລາວ ໂທລະຄົມມະນາຄົມ ມະຫາຊົນ, ຮ່ວມລົງນາມໃນຄັ້ງນີ້ໂດຍ ທ່ານ ໝູພັນ ອຸດສາ ສະມາຊິກສະພາແຫ່ງຊາດ, ຄະນະພັກກະຊວງສຶກສາທິການ ແລະ ກິລາ, ຫົວໜ້າກົມອາຊີວະສຶກສາ ແລະ ທ່ານ ສຸພິນ ຈັນທະວີໄຊ ຄະນະບໍລິຫານງານພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ເລຂາຄະນະພັກຮາກຖານ ບໍລິສັດ ລາວ ໂທລະຄົມມະນາຄົມ ມະຫາຊົນ, ຜູ້ອຳນວຍການໃຫຍ່ ບໍລິສັດ ລາວ ໂທລະຄົມມະນາຄົມ ມະຫາຊົນ ແລະ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານ ຂອງ ຄະນະນຳ ແລະ ຜູ້ບໍລິຫານທັງສອງຝ່າຍ




